ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 158 /ສພຂ.ຊຍ
ໄຊຍະບູລີ, ວັນທີ 30 ທັນວາ 2024

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງ
# ວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ປະຈໍາປີ 2024 ແລະ ທິດທາງແຜນການ ປີ 2025

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2024 ແລະ ທິດທາງແຜນການ ປະຈໍາປີ 2025, ການປະກອບຄໍາເຫັນຂອງຄະນະປະຈໍາສະພາປະຊາຊົນແຂວງ ແລະ ສະມາຊິກສະພາປະຊາຊົນແຂວງ.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ປະຈໍາປີ 2024**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ແລະ ເຫັນດີຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈໍາປີ 2024, ສາມາດປະຕິບັດສໍາເລັດໄດ້ຫຼາຍຄາດໝາຍ, ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ ໜັກແໜ້ນ, ເສດຖະກິດ ໄດ້ຂະຫຍາຍຕົວຢູ່ໃນລະດັບ 5.4%, ລວມຍອດຜະລິດຕະພັນພາຍໃນ ບັນລຸໄດ້ 23.868 ຕື້ກີບ, ເຮັດໃຫ້ສັງຄົມມີຄວາມສະຫງົບໂດຍພື້ນຖານ, ຫຼາຍຄາດໝາຍທາງດ້ານເສດຖະກິດ ປະຕິບັດໄດ້ລື່ນແຜນການ ສາມາດປະຕິບັດລາຍຮັບ ໄດ້ທັງໝົດ 2.347,38 ຕື້ກີບ (ຮອດວັນທີ 19/12/2024) ເທົ່າກັບ 112,19% ຂອງແຜນການປີ, ການລະດົມທຶນເພື່ອພັດທະນາ ປະຕິບັດໄດ້ 4.070,94 ຕື້ກີບ, ປູກພືດເປັນສິນຄ້າເພື່ອສົ່ງອອກໄດ້ທັງໝົດ 3.286.898 ໂຕນ ທຽບໃສ່ມະຕິເທົ່າກັບ 164%, ລື່ນແຜນການປີ 64% ແລະ ສົ່ງອອກສິນຄ້າໄດ້ 79,4 ລ້ານໂດລາ ເກີນດຸນ 33,87 ລ້ານໂດລາ (ສ່ວນໃຫຍ່ແມ່ນຜົນຜະລິດກະສິກໍາ ກວມເອົາ 98,82%) ແລະ ບາງ

ຄາດໝາຍດ້ານວັດທະນະທຳ-ສັງຄົມ ໂດຍສະເພາະແມ່ນອັດຕາເຂົ້າຮຽນຂອງເດັກ 5 ປີ, ອັດຕາເຂົ້າຮຽນສຸດທິ ຊັ້ນປະຖົມ 6-10 ປີ, ການຂະຫຍາຍອັດຕາປົກຄຸມປະກັນສັງຄົມ ປະຕິບັດໄດ້ລື່ນແຜນການ 63%, ການພັດທະນາສີມືແຮງງານ ໄດ້ລື່ນແຜນການ 3 ເທົ່າຕົວ ໄດ້ 188 %, ຮັກສາອັດຕາປົກຄຸມປະກັນສຸຂະພາບ ໄດ້ 100%, ສາມາດຜະລິດຂ່າວໄດ້ລື່ນຂາດໝາຍ 10,6%.

**ມາດຕາ 2 ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2025**

ກອງປະຊຸມເຫັນດີ ຮັບຮອງເອົາຄາດໝາຍ ແຜນພັດທະນາເສດຖະກິດ-ສັງຄົມ ປີ 2025 ຂອງແຂວງ ດັ່ງນີ້:

1. **ຄາດໝາຍເສດຖະກິດມະຫາພາກ:**

**1.1 ຄາດໝາຍການເຕີບໂຕເສດຖະກິດ:**

❖ ຄາດຄະເນການເຕີບໂຕເສດຖະກິດຂອງແຂວງຮອດທ້າຍປີ 2025 ໃຫ້ຂະຫຍາຍຕົວ ຢູ່ໃນລະດັບບໍ່ໃຫ້ ຫລຸດ 5% ແລະ ລວມຍອດຜະລິດຕະພັນພາຍໃນໃຫ້ບັນລຸ 25,960 ຕື້ກີບ, ລາຍໄດ້ສະເລ່ຍຕໍ່ຫົວຄົນໃຫ້ບັນລຸ 59 ລ້ານກີບ ໃນນີ້:

+ ຂະແໜງກະສິກຳ ຂະຫຍາຍຕົວ 4,4% ກວມເອົາ 57%;

+ ຂະແໜງອຸດສາຫະກຳ ຂະຫຍາຍຕົວ 6% ກວມເອົາ 23%;

+ ຂະແໜງບໍລິການ ຂະຫຍາຍຕົວ 6,2% ກວມເອົາ 20%;

+ ພາສີອາກອນ ຂະຫຍາຍຕົວ 1,9% ກວມເອົາ 0,4%.

**1.2 ວຽກການເງິນ:**

+ ດ້ານລາຍຮັບ: ຈັດເກັບລາຍຮັບ ໃຫ້ໄດ້ 2.765,39 ຕື້ກີບ ໃນນີ້:

- ລາຍຮັບ ພູດສູນກາງ ໃຫ້ໄດ້ 1.365,20 ຕື້ກີບ,
- ລາຍຮັບພູດທ້ອງຖິ່ນ ໃຫ້ໄດ້ 1.400,10 ຕື້ກີບ.

+ ດ້ານລາຍຈ່າຍ: ຄຸ້ມຄອງລາຍຈ່າຍ ບໍ່ໃຫ້ເກີນ 754,14 ຕື້ກີບ;

+ ດຸ່ນດ່ຽງງົບປະມານ: ເກີນດຸນງົບປະມານ 654,95 ຕື້ກີບ (ດຸນໃຫ້ສູນກາງ).

**1.3 ແຫຼ່ງທຶນພັດທະນາ:**

❖ ສູ້ຊົນລະດົມທຶນເພື່ອພັດທະນາ ໃຫ້ໄດ້ 20% ຂອງ GDP ໃນນີ້:

+ ການລົງທຶນຂອງລັດ ກວມເອົາ 5% ຂອງການລົງທຶນທັງໝົດ;

+ ການລົງທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ ກວມເອົາ 10% ຂອງການລົງທຶນທັງໝົດ;

+ ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ກວມເອົາ 60% ຂອງການລົງທຶນທັງໝົດ;

+ ແຫຼ່ງທຶນອື່ນໆ ກວມເອົາ 25% ຂອງການລົງທຶນທັງໝົດ.

2. **ຄາດໝາຍດ້ານເສດຖະກິດບັນດາຂະແໜງການ:**

**2.1 ຄາດໝາຍຂະແໜງ ກະສິກຳ ແລະ ປ່າໄມ້**

- ສູ້ຊົນຜະລິດເຂົ້າບໍ່ໃຫ້ລຸດ 190.000 ໂຕນ;
- ສູ້ຊົນປູກພືດເປັນສະບຽງອາຫານໃຫ້ໄດ້ 160.000 ໂຕນ;
- ສູ້ຊົນປູກພືດເປັນສິນຄ້າໃຫ້ໄດ້ຜົນຜະລິດ 2.500.000 ໂຕນ;
- ສູ້ຊົນໃຫ້ຝູງສັດລ້ຽງ (ງົວ, ຄວາຍ) ຂະຫຍາຍຕົວໃນລະດັບ 7%;
- ສູ້ຊົນຜະລິດ ຊີ້ນ, ໄຂ່, ປາ ໃຫ້ໄດ້ 24.079 ໂຕນ , ສະເລ່ຍ 55 ກິໂລ/ຄົນ/ປີ ຂຶ້ນໄປ;

ຄາດໝາຍດ້ານວັດທະນະທຳ-ສັງຄົມ ໂດຍສະເພາະແມ່ນອັດຕາເຂົ້າຮຽນຂອງເດັກ 5 ປີ, ອັດຕາເຂົ້າຮຽນສຸດທິ ຊັ້ນປະຖົມ 6-10 ປີ, ການຂະຫຍາຍອັດຕາປົກຄຸມປະກັນສັງຄົມ ປະຕິບັດໄດ້ລື່ນແຜນການ 63%, ການພັດທະນາສີມືແຮງງານ ໄດ້ລື່ນແຜນການ 3 ເທົ່າຕົວ ໄດ້ 188 %, ຮັກສາອັດຕາປົກຄຸມປະກັນສຸຂະພາບ ໄດ້ 100%, ສາມາດຜະລິດຂ້າວໄດ້ລື່ນຂາດໝາຍ 10,6%.

**ມາດຕາ 2 ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2025**

ກອງປະຊຸມເຫັນດີ ຮັບຮອງເອົາຄາດໝາຍ ແຜນພັດທະນາເສດຖະກິດ-ສັງຄົມ ປີ 2025 ຂອງແຂວງ ດັ່ງນີ້:

1. **ຄາດໝາຍເສດຖະກິດມະຫາພາກ:**

**1.1 ຄາດໝາຍການເຕີບໂຕເສດຖະກິດ:**

❖ ຄາດຄະເນການເຕີບໂຕເສດຖະກິດຂອງແຂວງຮອດທ້າຍປີ 2025 ໃຫ້ຂະຫຍາຍຕົວ ຢູ່ໃນລະດັບບໍ່ໃຫ້ ຫລຸດ 5% ແລະ ລວມຍອດຜະລິດຕະພັນພາຍໃນໃຫ້ບັນລຸ 25,960 ຕື້ກີບ, ລາຍໄດ້ສະເລ່ຍຕໍ່ຫົວຄົນໃຫ້ບັນລຸ 59 ລ້ານກີບ ໃນນີ້:

+ ຂະແໜງກະສິກຳ ຂະຫຍາຍຕົວ 4,4% ກວມເອົາ 57%;

+ ຂະແໜງອຸດສາຫະກຳ ຂະຫຍາຍຕົວ 6% ກວມເອົາ 23%;

+ ຂະແໜງບໍລິການ ຂະຫຍາຍຕົວ 6,2% ກວມເອົາ 20%;

+ ພາສີອາກອນ ຂະຫຍາຍຕົວ 1,9% ກວມເອົາ 0,4%.

**1.2 ວຽກການເງິນ:**

+ ດ້ານລາຍຮັບ: ຈັດເກັບລາຍຮັບ ໃຫ້ໄດ້ 2.765,39 ຕື້ກີບ ໃນນີ້:

- ລາຍຮັບ ພູດສູນກາງ ໃຫ້ໄດ້ 1.365,20 ຕື້ກີບ,
- ລາຍຮັບພູດທ້ອງຖິ່ນ ໃຫ້ໄດ້ 1.400,10 ຕື້ກີບ.

+ ດ້ານລາຍຈ່າຍ: ຄຸ້ມຄອງລາຍຈ່າຍ ບໍ່ໃຫ້ເກີນ 754,14 ຕື້ກີບ;

+ ດຸ່ນດ່ຽງງົບປະມານ: ເກີນດຸນງົບປະມານ 654,95 ຕື້ກີບ (ດຸນໃຫ້ສູນກາງ).

**1.3 ແຫຼ່ງທຶນພັດທະນາ:**

❖ ສູ້ຊົນລະດົມທຶນເພື່ອພັດທະນາ ໃຫ້ໄດ້ 20% ຂອງ GDP ໃນນີ້:

+ ການລົງທຶນຂອງລັດ ກວມເອົາ 5% ຂອງການລົງທຶນທັງໝົດ;

+ ການລົງທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ ກວມເອົາ 10% ຂອງການລົງທຶນທັງໝົດ;

+ ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ກວມເອົາ 60% ຂອງການລົງທຶນທັງໝົດ;

+ ແຫຼ່ງທຶນອື່ນໆ ກວມເອົາ 25% ຂອງການລົງທຶນທັງໝົດ.

2. **ຄາດໝາຍດ້ານເສດຖະກິດບັນດາຂະແໜງການ:**

**2.1 ຄາດໝາຍຂະແໜງ ກະສິກຳ ແລະ ປ່າໄມ້**

- ສູ້ຊົນຜະລິດເຂົ້າບໍ່ໃຫ້ລຸດ 190.000 ໂຕນ;
- ສູ້ຊົນປູກພືດເປັນສະບຽງອາຫານໃຫ້ໄດ້ 160.000 ໂຕນ;
- ສູ້ຊົນປູກພືດເປັນສິນຄ້າໃຫ້ໄດ້ຜົນຜະລິດ 2.500.000 ໂຕນ;
- ສູ້ຊົນໃຫ້ຝູງສັດລ້ຽງ (ງົວ, ຄວາຍ) ຂະຫຍາຍຕົວໃນລະດັບ 7%;
- ສູ້ຊົນຜະລິດ ຊີ້ນ, ໄຂ່, ປາ ໃຫ້ໄດ້ 24.079 ໂຕນ , ສະເລ່ຍ 55 ກິໂລ/ຄົນ/ປີ ຂຶ້ນໄປ;

- ສູ້ຊົນສົ່ງສັດອອກໄປຕ່າງແຂວງ ປະເພດ ງົວ, ຄວາຍ, ໝູ ທັງໝົດໃຫ້ໄດ້ 36.500 ໂຕ;
- ປູກໄມ້ ໃຫ້ໄດ້ 3.560 ເຮັກຕາ, ຟື້ນຟູປ່າໃຫ້ໄດ້ 20.000 ເຮັກຕາ;
- ສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ 1.500 ຄອບຄົວ, ສ້າງຄອບຄົວພັດທະນາ ໃຫ້ໄດ້ 2.000 ຄອບຄົວ;
- ສ້າງບ້ານພົ້ນທຸກໃຫ້ໄດ້ 8 ບ້ານ, ບ້ານພັດທະນາໃຫ້ໄດ້ 10 ບ້ານ;
- ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍ 01 ຈຸດ ຄື ບ້ານທອງ ເມືອງເງິນ, ເມືອງພົ້ນທຸກ 01 ເມືອງຄື: ເມືອງ ໄຊຍະບູລີ.

2.2 **ຄາດໝາຍຂະແໜງ ອຸດສາຫະກຳ ແລະ ການຄ້າ**

- ສູ້ຊົນ ລວມຍອດມູນຄ່າການຜະລິດດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ບັນລຸ 358,07 ຕື້ກີບ, ລວມຍອດມູນຄ່າການຈຳໜ່າຍຜະລິດດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 521,18 ຕື້ກີບ;
- ສືບຕໍ່ຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ປະກອບການໃຫ້ໄດ້ 225 ຫົວໜ່ວຍ;
- ສືບຕໍ່ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃນການສົ່ງອອກສິນຄ້າ ໂດຍສະເພາະຜະລິດຕະພັນກະສິກຳ, ເຄື່ອງປ່າຂອງດົງ, ຫີນຂັບ, ຖ່ານດັ່ງໄຟ ໃຫ້ປະຕິບັດໄດ້ຕາມຄາດໝາຍ ມູນຄ່າ 101 ລ້ານໂດລາສະຫະລັດ;
- ສືບຕໍ່ອຳນວຍຄວາມສະດວກແກ່ການນຳເຂົ້າສິນຄ້າທີ່ຈຳເປັນເຊັ່ນ: ສະບຽງອາຫານ ແລະ ເຄື່ອງດື່ມ, ເຄື່ອງກໍ່ສ້າງ ແລະ ເຄື່ອງໄຟຟ້າ, ແນວພັນພືດ ແລະ ເຄື່ອງຮັບໃຊ້ການຜະລິດ, ພາຫະນະ ແລະ ເຄື່ອງອາໄຫຼ່, ນ້ຳມັນເຊື້ອໄຟ ໃຫ້ໄດ້ຄາດໝາຍ ມູນຄ່າ 61 ລ້ານໂດລາສະຫະລັດ;
- ສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງໂດຍສະເພາະແມ່ນຂະແໜງພາສີ, ຂະແໜງຄຸ້ມຄອງຄົນເຂົ້າ-ອອກເມືອງ (ຕມ), ຂະແໜງພາຍໃນ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນໆລົງຊຸກຍູ້ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກສິນຄ້າ ຢູ່ບັນດາ 4 ດ່ານສາກົນຄື: ດ່ານສາກົນນ້ຳເຫືອງ, ດ່ານສາກົນພູດູ່, ດ່ານສາກົນນ້ຳເງິນ ແລະ ດ່ານສາກົນປາງມອນ;
- ສູ້ຊົນຄຸ້ມຄອງຈໍລະຈອນສິນຄ້າພາຍໃນໃຫ້ຂະຫຍາຍຕົວ 3% ຕໍ່ປີ;
- ສູ້ຊົນສ້າງສິນຄ້າ ໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP) ໃຫ້ໄດ້ 2 ຜະລິດຕະພັນຂຶ້ນໄປ.

2.3 **ຄາດໝາຍຂະແໜງ ພະລັງງານ ແລະ ບໍ່ແຮ່**

- ຄົ້ນຄວ້າ ແລະ ປະເມີນບັນດາໂຄງການສຶກສາສຳຫຼວດເຂື່ອນໄຟຟ້າຂະໜາດນ້ອຍ ທີ່ຢູ່ໃນຂັ້ນຕອນບົດບັນທຶກຄວາມເຂົ້າໃຈ ແລະ ໃບອະນຸຍາດປະເພດ I ຈຳນວນ 07 ໂຄງການ ເພື່ອຄັດເລືອກເອົາໂຄງການທີ່ມີຄວາມຄືບໜ້າ ແລະ ມີເງື່ອນໄຂ ໄດ້ກ້າວເຂົ້າສູ່ຂັ້ນຕອນພັດທະນາ PDA 01 ໂຄງການ;
- ສືບຕໍ່ປັບປຸງ, ຂະຫຍາຍລະບົບຕາຂ່າຍໄຟຟ້າ 22 KV ແລະ 0,4 KV ເພື່ອໃຫ້ລະບົບມີຄວາມສະຖຽນລະພາບ ສະໜອງພະລັງງານໃຫ້ຜູ້ຊົມໃຊ້ພຽງພໍ ແລະ ທົ່ວເຖິງ ໂດຍສະເພາະ ສູ້ຊົນຈັດຕັ້ງປະຕິບັດໂຄງການກໍ່ສ້າງ ຕາຂ່າຍໄຟຟ້າ ແຮງກາງ 22 KV, ແຮງຕ່ຳ 0,4 KV ແລະ ຕິດຕັ້ງໝໍ້ແປງ ເຂົ້າບ້ານໂພນສີດາ ແລະ ບ້ານນາຂອນແກ່ນ ເມືອງ ໄຊຍະບູລີ ໃຫ້ສຳເລັດ ແລະ ເປີດນຳໃຊ້;
- ສູ້ຊົນ ໃຫ້ປະຊາຊົນໄດ້ຮັບການຊົມໃຊ້ໄຟຟ້າ ຖາວອນເພີ່ມຂຶ້ນ ແລະ ໃຫ້ບ້ານມີໄຟຟ້າຊົມໃຊ້ໃນລະບົບ 01 ບ້ານ ແລະ ຄອບຄົວໃຫ້ໄດ້ 1.000 ຄອບຄົວ;
- ສືບຕໍ່ຊຸກຍູ້, ສົ່ງເສີມ ການຜະລິດ ແລະ ຈຳໜ່າຍ ພະລັງງານ ໃນປີ 2025: ຄາດຄະເນຜະລິດ (ຊື້) ກະແສໄຟຟ້າ ໃຫ້ໄດ້ 244,77 ລ້ານກິໂລວັດໂມງ, ມູນຄ່າ 326,98 ຕື້ກີບ, ຄາດຄະເນ ຈຳໜ່າຍກະແສໄຟຟ້າໃຫ້ໄດ້ 222,51 ລ້ານກິໂລວັດໂມງ, ມູນຄ່າ 291,99 ຕື້ກີບ;

- ສືບຕໍ່ ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຢັ້ງຢືນການຈັດຕັ້ງປະຕິບັດ ໂຄງການລົງທຶນຂຸດຄົ້ນ-ສຳຫຼວດແຮ່ທາດ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຢູ່ໃນທົ່ວແຂວງ;
- ເຂົ້າຮ່ວມໃນການລົງກວດກາສະຖານທີ່ຂຸດຄົ້ນຫີນແຮ່-ຊາຍ ແລະ ເກັບຕົວຢ່າງໄປວິໃຈ, ທົດລອງ, ສືບຕໍ່ຕິດຕາມ ໂຄງການ ທີ່ຍັງມີການເຄື່ອນໄຫວຂັ້ນສູນກາງ ແລະ ທ້ອງຖິ່ນອະນຸຍາດ, ເກັບກຳຂໍ້ມູນຈຸດປະກົດແຮ່ທາດປະເພດຕ່າງໆ ພ້ອມທັງສ້າງຖານ ຂໍ້ມູນໃຫ້ເປັນລະບົບເພື່ອດຶງດູດນັກລົງທຶນ;
- ສືບຕໍ່ຊຸກຍູ້, ສົ່ງເສີມການຜະລິດ ແລະ ຈຳໜ່າຍແຮ່ທາດ ( ພາຍໃນ ແລະ ຕ່າງປະເທດ ) ຢູ່ພາຍໃນແຂວງໃນປີ 2025: ຄາດຄະເນຜະລິດແຮ່ທາດຫີນປູນ ໃຫ້ໄດ້ ຈຳນວນ 300.000 ແມັດກ້ອນ ແລະ ຄາດຄະເນຈຳໜ່າຍຫີນປູນພາຍໃນ ໃຫ້ໄດ້ 50.000 ແມັດກ້ອນ, ຄາດຄະເນຈຳໜ່າຍ ຕ່າງປະເທດ ໃຫ້ໄດ້ 250.000 ແມັດກ້ອນ;
- ຊຸກຍູ້, ສົ່ງເສີມການກໍ່ສ້າງໂຮງງານປຸງແຕ່ງແຮ່ຄຳໃຫ້ສຳເລັດ 01 ແຫ່ງຢູ່ເມືອງ ປາກລາຍ;
- ກວດກາ, ປະເມີນຜົນບັນດາໂຄງການຂຸດຄົ້ນແຮ່ທາດຢູ່ພາຍໃນແຂວງ ໂຄງການໃດບໍ່ມີ ການເຄື່ອນໄຫວ ຫຼື ດຳເນີນກິດຈະການແບບບໍ່ມີປະສິດທິພາບ ແມ່ນຈະໄດ້ນຳສະເໜີ ຄະນະຄຸ້ມຄອງການລົງທຶນ ແຂວງ ເພື່ອຍົກເລີກສັນຍາຕາມລະບຽບກົດໝາຍ.

**2.4 ຄາດໝາຍຂະແໜງ ໂຍທາທິການ ແລະ ຂົນສົ່ງ**

- ສືບຕໍ່ຈັດຕັ້ງປະຕິບັດ ໂຄງການສ້ອມແປງເປັນກຳນົດຕາມທາງຫລວງແຫ່ງຊາດ ເລກ 4, ເລກ 4A, 2W, ປະກອບມີ 8 ສັນຍາ, ມີລວງຍາວ 438,38 ກມ ແລະ ໂຄງການວຽກສຸກເສີນທີ່ຈະເກີດຂຶ້ນໃນຊ່ວງລະດູຝົນ;
- ໂຄງການກໍ່ສ້າງເສັ້ນທາງປູອັດສະຟານ ຢູ່ພາຍໃນເທດສະບານແຂວງ ຈຳນວນ 10 ສັນຍາ, ລວງຍາວທັງໝົດ 23,8 ກມ, ກໍ່ສ້າງທາງປູເບຕົງບັນດາທາງຊອຍ ແລະ ທາງສາຍຫຼັກໃນຜັງເມືອງ ພາຍໃນເທດສະບານເມືອງ, ເທດສະບານແຂວງ ພາຍໃຕ້ຮູບການແບບມີສ່ວນລັດສະໜອງປູນຊີມັງ, ປະຊາຊົນເປັນແຮງງານ ແລະ ວັດສະດຸຫີນ, ແຮ່, ຊາຍ, ເຫຼັກ ແລະ ໄມ້;
- ສືບຕໍ່ຈັດຕັ້ງປະຕິບັດ ໂຄງການກໍ່ສ້າງຄ້ານຕາຝັ່ງເຈື່ອນ (ນ້ຳເຫືອງ ແລະ ນ້ຳຂອງ).
- ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ບັນດາເສັ້ນທາງຍຸດທະສາດ ແລະ ຮັບໃຊ້ການພັດທະນາເສດຖະກິດເຊື່ອມໂຍງກັບພາກພື້ນ ຈຳນວນ 2 ເສັ້ນ, ລວງຍາວ 59 ກມ;
- ໂຄງການສ້ອມແປງບູລະນະ ຮັກສາທາງຫຼວງທ້ອງຖິ່ນ ຕາມປົກກະຕິແບບມອບເໝົາ ຈຳນວນ 13 ເສັ້ນ, ລວງຍາວ 419,72 ກມ;
- ໂຄງການ ກໍ່ສ້າງທ່ານ້ຳເງິນ ເມືອງເງິນ ແລະ ປັບປຸງທ່ານປະເພນີຈຳນວນໜຶ່ງ, ສືບຕໍ່ກໍ່ສ້າງ ແລະ ປັບປຸງລະບົບຂົນສົ່ງໂລຈິດສະຕິກຢູ່ 3 ຈຸດ ຄື: ທ່ານ້ຳເຫືອງ, ທ່ານ້ຳເງິນ ແລະ ທ່າປາງມອນ;

**2.5 ຄາດໝາຍຂະແໜງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

- ຜັນຂະຫຍາຍແຜນຈັດສັນທີ່ດິນຂັ້ນແຂວງມາເປັນ ແຜນຈັດສັນທີ່ດິນຂັ້ນເມືອງໃຫ້ໄດ້ 01 ເມືອງ ແລະ ຈັດສັນທີ່ດິນຂັ້ນບ້ານໃຫ້ໄດ້ 27 ບ້ານ;
- ເກັບກຳຂໍ້ມູນ, ຂຶ້ນສຳມະໂນພາສີທີ່ດິນໃຫ້ໄດ້ 500 ຕອນ ຕິດພັນກັບການຂຶ້ນທະບຽນອອກໃບຕາດິນ ພ້ອມທັງບັນທຶກຂໍ້ມູນເຂົ້າລະບົບທີ່ທັນສະໄໝ ໃຫ້ໄດ້ 5.000 ຕອນ;
- ຕິດຕາມ, ກວດກາບັນດາໂຄງການ, ຂຶ້ນບັນຊີເຊົ່າ-ສຳປະທານທີ່ດິນຂອງລັດ ໃຫ້ສຳເລັດ ພ້ອມທັງຫັນໄປເຂົ້າໃນລະບົບແຜນທີ່;

- ຊຸກຍູ້ ແລະ ເຜີຍແຜ່ຄູ່ມືການສ້າງບ້ານຂຽວ, ສະອາດ, ງາມຕາ ໃຫ້ໄດ້ 44 ບ້ານ, ໂຮງຮຽນ ຂຽວ ສະອາດ ງາມຕາ ໃຫ້ໄດ້ 30 ໂຮງຮຽນ ແລະ ສຳນັກງານ, ອົງການ ຂຽວ ສະອາດ ງາມຕາ ໃຫ້ໄດ້ 20 ແຫ່ງ;
- ພິຈາລະນາອອກໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມໃຫ້ໄດ້ 420 ຫົວໜ່ວຍ ໃນນັ້ນ: ອອກໃໝ່ ໃຫ້ໄດ້ 170 ຫົວໜ່ວຍ(ໃນນັ້ນ IEE: 20 ຫົວໜ່ວຍ, EMP: 150 ຫົວໜ່ວຍ), ຕໍ່ 250 ຫົວໜ່ວຍ (IEE: 25 ຫົວໜ່ວຍ, EMP: 225 ຫົວໜ່ວຍ);
- ສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດກາງແບບເຊື່ອມສານ ທີ່ເປັນບຸລິມະສິດຂອງແຂວງ ໃຫ້ໄດ້ 01 ອ່າງ, ອອກໃບອະນຸຍາດການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ໄດ້ 21 ຫົວໜ່ວຍ ແລະ ຕິດຕາມກວດກາ ຄຸນນະພາບນ້ຳຕາມແມ່ນ້ຳສາຍຫຼັກ ທີ່ໄດ້ກຳນົດໄວ້ຈຳນວນ 28 ຈຸດ;
- ສັງລວມບັນດາໂຄງການ, ກິດຈະການ ເພື່ອເປັນຂໍ້ມູນໃນການສ້າງແຜນຕິດຕາມແຜນຄຸ້ມຄອງ ສິ່ງແວດລ້ອມໂຄງການ,ກິດຈະການ ໄດ້ 11 ເມືອງ;
- ຕິດຕາມກວດກາບັນດາໂຄງການ ແລະ ກິດຈະການຕາມແຜນຄຸ້ມຄອງສິ່ງແວດລ້ອມຂັ້ນຄຸ້ມຄອງ EIA ໃຫ້ໄດ້ 5 ໂຄງການ, IEE ໃຫ້ໄດ້ 35 ໂຄງການ ແລະ EMP ໃຫ້ໄດ້ 150 ກິດຈະການ.

**2.6 ຄາດໝາຍຂະແໜງ ເຕັກໂນໂລຊີ ແລະ ການສື່ສານ**

- ສືບຕໍ່ຊຸກຍູ້ບັນດາບໍລິສັດ ໂທລະຄົມມະນາຄົມ ຂະຫຍາຍໂຄງລ່າງພື້ນຖານຕາໜ່າງໂທລະຄົມ ບ້ານທີ່ບໍ່ມີ ສັນຍານຈຳນວນ 03 ບ້ານ ເທົ່າກັບ 60% ຂອງບ້ານທີ່ ບໍ່ມີສັນຍານ, ປັບປຸງບ້ານທີ່ມີສັນຍານອ່ອນ ຈຳ ນວນ 19 ບ້ານໃຫ້ໄດ້ 50% ຂຶ້ນໄປ ແລະ ຂະຫຍາຍ ສັນຍານອິນເຕີເນັດ ຈຳນວນ 29 ບ້ານໃຫ້ໄດ້ 30% ຂຶ້ນໄປ;
- ຊຸກຍູ້ ສົ່ງເສີມໃຫ້ບັນດາພະແນກການ, ອົງການ, ກົມກອງ ແລະ ບັນດາເມືອງ ທີ່ມີເງື່ອນໄຂເປີດນຳເວັບ ໄຊຂອງພາກລັດ (G-Web Platform) ໃຫ້ໄດ້ 06 ເວັບໄຊ;
- ສືບຕໍ່ຊຸກຍູ້ຕິດຕາມ, ກວດກາ ແລະ ເກັບຄ່າທຳນຽມ-ຄ່າບໍລິການ ນຳບັນດາຫ້າງຮ້ານທີ່ດຳເນີນທຸລະກິດ ດ້ານ ICT ໃຫ້ໄດ້ 141 ຫົວໜ່ວຍ;
- ສືບຕໍ່ຊຸກຍູ້ບັນດາບໍລິສັດ ໂທລະຄົມມະນາຄົມຂະຫຍາຍໂຄງລ່າງພື້ນຖານຕາໜ່າງໂທລະຄົມ ໃນບ້ານທີ່ບໍ່ ມີສັນຍານຈຳນວນ 01 ບ້ານ (ບ້ານຫ້ວຍງູ ເມືອງປາກລາຍ).

**3. ຄາດໝາຍດ້ານວັດທະນະທຳ - ສັງຄົມ:**

**3.1 ຄາດໝາຍຂະແໜງ ສຶກສາທິການ ແລະ ກິລາ**

- ອັດຕາເຂົ້າຮຽນຂອງນັກຮຽນ 5 ປີ ບໍ່ໃຫ້ຫຼຸດ 98% ຂຶ້ນໄປ;
- ອັດຕາເຂົ້າຮຽນໃໝ່ລວມ ປ.1 ໃຫ້ບັນລຸ 101 - 100%;
- ອັດຕາເຂົ້າໃໝ່ສຸດທິ ປ.1 ບໍ່ໃຫ້ຫຼຸດ 99%;
- ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (6 - 10 ປີ) ບໍ່ໃຫ້ຫຼຸດ 99%;
- ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ບັນລຸ 101 - 100%;
- ອັດຕາປະລະຂັ້ນ ປ.1 ບໍ່ໃຫ້ເກີນ 2%;
- ອັດຕາຈົບຊັ້ນປະຖົມ (ອັດຕາເລື່ອນຂັ້ນ - ຈົບຊັ້ນ) ບໍ່ໃຫ້ຫຼຸດ 96,3%;
- ອັດຕາຄ້າງຫ້ອງຊັ້ນປະຖົມ ບໍ່ໃຫ້ເກີນ 2,1%;
- ອັດຕາປະລະຊັ້ນປະຖົມ ບໍ່ໃຫ້ເກີນ 1,9%;
- ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃຫ້ໄດ້ 87,5% ຂຶ້ນໄປ;
- ດັດສະນີຄວາມສະເໝີພາບຍິງ - ຊາຍຂອງອັດຕາເລື່ອນຊັ້ນ ປ.5 ຫາ ມ.1 ຢູ່ໃນລະຫວ່າງ (0,97- 1,03);
- ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ ບໍ່ໃຫ້ຫຼຸດ 83%;

- ສ້າງກົມກອງວັດທະນະທຳ ໃຫ້ໄດ້ 25 ກົມກອງ;
- ສຳຫຼວດ, ຈັດສັນ ແລະ ພັດທະນາແຫຼ່ງທ່ອງທ່ຽວ ໃຫ້ໄດ້ 1 ແຫ່ງ;
- ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ເຮັດວຽກງານບໍລິການທ່ອງທ່ຽວ ໃຫ້ໄດ້ 100 ຄົນຂຶ້ນໄປ;
- ດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວ ແລະ ຜ່ານແຂວງໄຊຍະບູລີ ໃຫ້ໄດ້ 125.000 ຄົນ ແລະ ສ້າງລາຍຮັບໃນຮູບແບບກະຈາຍລາຍໄດ້ທົ່ວສັງຄົມ ໃຫ້ໄດ້ 6,2 ລ້ານໂດລາສະຫະລັດ.

**3.4 ຄາດໝາຍຂະແໜງ ແຮງງານ ແລະ ສະຫວັດດີການສັງຄົມ**

- ສູ້ຊົນເຮັດໃຫ້ກຳລັງແຮງງານລາວ ໄດ້ຮັບການຝຶກອົບຮົມ ແລະ ພັດທະນາສີມືແຮງງານ ເພື່ອຕອບສະໜອງໃຫ້ແກ່ການພັດທະນາ ຕາມຂະແໜງການ ແລະ ໂຄງປະກອບເສດຖະກິດໃຫ້ໄດ້ 11.861 ຄົນ, ດຸ່ນດ່ຽງອັນຕາສ່ວນແຮງງານຂອງຂະແໜງກະສິກຳໃຫ້ຫລຸດລົງ, ຂະແໜງອຸດສາຫະກຳ, ບໍລິການ ໃຫ້ເພີ່ມຂຶ້ນ ແລະ ຄວບຄຸມອັດຕາການວ່າງງານໃຫ້ຢູ່ໃນລະດັບບໍ່ເກີນ 2,5%;
- ສູ້ຊົນຈັດຫາງານພາຍໃນໃຫ້ກຳລັງແຮງງານລາວເຂົ້າເຮັດວຽກໃຫ້ໄດ້ 2.714 ຄົນ, ໃຫ້ຫົວໜ່ວຍແຮງງານເຮັດ ສັນຍາແຮງງານໃຫ້ໄດ້ 02 ແຫ່ງ, ຊຸກຍູ້ຫົວໜ່ວຍແຮງງານສ້າງ ແລະ ປັບປຸງກົດລະບຽບພາຍໃນໃຫ້ໄດ້ຕື່ມອີກ 05 ແຫ່ງ;
- ຂະຫຍາຍອັດຕາການປົກຄຸມໃຫ້ໄດ້ 938 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍ ຕາມດຳລັດ 272/ລບ ໃຫ້ຜູ້ທີ່ມີຄຸນງາມຄວາມດີໃນ ພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ ໃຫ້ໄດ້ຈຳນວນ 39 ທ່ານ;
- ຂະຫຍາຍຕາໜ່າງປົກປ້ອງເດັກຂັ້ນບ້ານໃຫ້ໄດ້ 25 ບ້ານ/ປີ;
- ປຸກລະດົມທຶນເຂົ້າກອງທຶນຄຸ້ມຄອງໄພພິ ບັດໃຫ້ໄດ້ 600 ລ້ານກີບ/ປີ;
- ຂະຫຍາຍຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານໃຫ້ໄດ້ 25 ບ້ານ;
- ສືບຕໍ່ປຸລະດົມບໍລິຈາກເລືອດຕາມກຸ່ມເປົ້າໝາຍຕ່າງໆ ໃຫ້ໄດ້ 3,920 ຖົງ, ເອົາໃຈໃສ່ໃຫ້ການ ບໍລິການວຽກງານກູ້ຊີບກູ້ໄພສຸກເສີນແກ່ສັງຄົມໃຫ້ວ່ອງໄວ ແລະ ທັນກັບເວລາ;
- ສືບຕໍ່ປຸກລະດົມທຶນ ເຂົ້າໃນວຽກງານກອງທຶນເລືອດໃຫ້ໄດ້ 550 ລ້ານກີບ.

**ມາດຕາ 3 ຮັບຮອງເອົາມາດຕະການ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2025**

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາ 3 ມາດຕະການ ຕາມການສະເໜີ ຂອງອົງການປົກຄອງແຂວງ, ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແຜນການດັ່ງກ່າວ, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ສືບຕໍ່ຜັນຂະຫຍາຍມະຕິ ສະບັບເລກທີ 04 ຂອງກົມການເມືອງສູນກາງພັກ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 01 ຂອງຄະນະປະຈຳພັກແຂວງ ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ໃນໄລຍະໃໝ່ ຕິດພັນກັບການແກ້ໄຂບັນຫາເຄັ່ງຮ້ອນ ທາງດ້ານເສດຖະກິດ-ການເງິນ ໃຫ້ເປັນຮູບປະທຳຫຼາຍຂຶ້ນ ໂດຍໃຫ້ຖືເປັນໜ້າວຽກບຸລິມະສິດຂອງແຜນພັດທະນາເສດຖະກິດສັງຄົມຂອງແຂວງ ປີ 2025;
2. ສຸມໃສ່ຈັດຕັ້ງປະຕິບັດ 7 ໜ້າວຽກຈຸດສຸມ ຂອງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຕິດພັນກັບການສັງລວມໃຫ້ເປັນອັນລະອຽດ ລະຫວ່າງ ແຜນພັດທະນາເສດຖະກິດ-ສັງຄົມ ກັບວາລະແຫ່ງຊາດ;
3. ເອົາໃຈໃສ່ ສ້າງສະພາບແວດລ້ອມການລົງທຶນ, ອຳນວຍຄວາມສະດວກໃຫ້ ການລົງທຶນພາຍໃນ ແລະ ຕ່າງປະເທດ ຢ່າງວ່ອງໄວ, ສືບຕໍ່ ດຶງດູດເອົາການລົງທຶນ ເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ມີຄຸນນະພາບ ເຂົ້າໃນຂະແໜງ ການບຸລິມະສິດ ຢ່າງແຂງແຮງ, ໄປຄວບຄູ່ກັບ ພັດທະນາ ວິສາຫະກິດຂະ

ໜາດນ້ອຍ - ຂະໜາດກາງ (SME) ແລະ ຈຸນລະວິສາຫະກິດ ໃຫ້ເຂັ້ມແຂງ, ສາມາດເຂົ້າເຖິງແຫຼ່ງທຶນໄດ້ສະດວກຂຶ້ນ;

4. ສືບຕໍ່ເອົາໃຈໃສ່ ຂຸດຄົ້ນແຫລ່ງລາຍຮັບໃໝ່ຕາມທ່າແຮງທີ່ມີໃຫ້ເພີ່ມຂຶ້ນ, ຈັດເກັບລາຍຮັບຈາກແຫລ່ງລາຍຮັບທີ່ມີຢູ່ໃຫ້ຄົບຖ້ວນ ຕິດພັນກັບທັນທັນສະໄໝຢ່າງແຂງແຮງ ໄປຄຽງຄູ່ກັບການຄຸ້ມຄອງເງິນຕາໃຫ້ເຂົ້າສູ່ລະບົບໃຫ້ໄດ້ຫຼາຍຂຶ້ນ; ເອົາໃຈໃສ່ ແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ແລະ ໜີ້ສິນຈາກຜົນການກວດສອບ-ກວດກາ ໃຫ້ຫຼຸດລົງເທື່ອລະກ້າວ; ປະຕິບັດມາດຕະການເຂັ້ມງວດ ຕໍ່ບຸກຄົນ ແລະ ຫົວໜ່ວຍງົບປະມານ ທີ່ລະເມີດລະບຽບກົດໝາຍ;

5. ສືບຕໍ່ຈັດສັນງົບປະມານແຜນການລົງທຶນຂອງລັດ ປະຈຳປີ 2025 ໃຫ້ສຳເລັດໂດຍໄວ ໂດຍສຸມໃສ່ການຊຳລະໜີ້ສິນທີ່ຈັດຕັ້ງປະຕິບັດສຳເລັດ ແລະ ໂຄງການແກ້ໄຂໄພພິບັດ ເປັນບຸລິມະສິດ, ໂຄງການສືບຕໍ່ທີ່ໃກ້ຈະສຳເລັດ ແລະ ໂຄງການສະເໜີ ທີ່ເປັນບຸລິມິສິດ ມີຄວາມຈຳເປັນແທ້; ເອົາໃຈໃສ່ ຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ໃຫ້ໄປຕາມແຜນການ ແລະ ສອດຄ່ອງຕາມລະບຽບກົດໝາຍ ໂດຍສຸມໃສ່ ຟື້ນຟູ, ບູລະນະສ້ອມແປງເສັ້ນທາງທີ່ເປ່ເພ ໃຫ້ສຳເລັດໂດຍໄວ ເພື່ອຮັບປະກັນ ການຄົມມະນາຄົມ-ຂົນສົ່ງ, ການະລິດ ແລະ ການທ່ອງທ່ຽວ; ດັດແກ້ມູນຄ່າໂຄງການລົງທຶນຂອງລັດ ໃຫ້ສາມາດຈັດຕັ້ງປະຕິບັດໄດ້;

6. ສືບຕໍ່ຍູ້ແຮງ ຂະບວນການຜະລິດເປັນສິນຄ້າ ເພື່ອທົດແທນການນຳເຂົ້າ ຢ່າງແຂງແຮງ ຕິດພັນກັບການປຸງແຕ່ງເພື່ອສົ່ງອອກໃຫ້ຫຼາຍຂຶ້ນ; ເອົາໃຈໃສ່ສ້າງ ແລະ ພັດທະນາ ກຸ່ມ - ສະຫະກອນການຜະລິດ ໃຫ້ເຂັ້ມແຂງ ແລະ ຍືນຍົງ; ໄປຄວບຄູ່ກັບ ການຊຸກຍູ້ສະໜັບສະໜູນດ້ານທຶນຮອນ, ເຕັກນິກ, ເຕັກໂນໂລຊີ ເພື່ອຍົກສູງທາງດ້ານຄຸນພາບພາບ ແລະ ປະລິມານ;

7. ເອົາໃຈໃສ່ໃນການຄຸ້ມຄອງ ແລະ ຕິດຕາມກວດກາລາຄາສິນຄ້າຕາມທ້ອງຕະຫຼາດໃຫ້ຢູ່ໃນເກນປົກກະຕິ, ປະຕິບັດມາດຕະການຈຳກັດການນຳເຂົ້າສິນຄ້າທີ່ບໍ່ຈຳເປັນຈາກຕ່າງປະເທດ ໃຫ້ເຂັ້ມງວດ, ໄປຄຽງຄູ່ກັບການຄົ້ນຄວ້າ ກຳນົດໂຄງສ້າງລາຄາສິນຄ້າທີ່ຈຳເປັນຂອງແຂວງ ໃຫ້ມີຄວາມຄືບໜ້າຫຼາຍຂຶ້ນ ແລະ ສົມເຫດສົມຜົນ;

8. ສຸມໃສ່ແກ້ໄຂບັນຫາເຄັ່ງຮ້ອນຂອງສັງຄົມ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດ ບັນດາຄາດໝາຍທີ່ມີຄວາມສ່ຽງບໍ່ທັນບັນລຸ ເປັນຕົ້ນ ບັນຫາ ການປະລະການຮຽນ-ການສອນ, ການເຂົ້າ-ອອກເມືອງບໍ່ຖືກຕ້ອງ, ການຂາດເຂີນແຮງງານ;

9. ສືບຕໍ່ສຸມໃສ່ສ້າງແຜນການນຳໃຊ້ທີ່ດິນຂັ້ນເມືອງໃຫ້ສຳເລັດຕາມແຜນການທີ່ວາງໄວ້, ໄປຄວບຄູ່ກັບການຂຶ້ນທະບຽນອອກໃບຕາດິນ ໂດຍສະເພາະ ເລັ່ງໃສ່ຂຶ້ນທະບຽນອອກໃບຕາດິນ ກະສິກຳ, ດິນປູກສ້າງ ໃຫ້ແກ່ປະຊາຊົນທີ່ໃນຂອບເຂດ 3 ປະເພດປ່າ ຕາມມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ໃຫ້ມີຄວາມຄືບໜ້າຫຼາຍຂຶ້ນ; ເອົາໃຈໃສ່ ຄຸ້ມຄອງ ປົກປັກຮັກສາ ແລະ ພັດທະນາ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້ ແລະ ໄຟໄໝ້ລາມປ່າ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

10. ສືບຕໍ່ຜັນຂະຫຍາຍ ຍຸດທະສາດການພັດທະນາແຮ່ທາດຮອດປີ 2030 ແລະ ວິໄສທັດຮອດປີ 2040; ຍຸດທະສາດວ່າດ້ວຍການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030 ແລະ ວິໄສທັດຮອດປີ 2040 ໃຫ້ເປັນແຜນງານ, ໂຄງການລະອຽດ ແລະ ສອດຄ່ອງກັບຄວາມເປັນຈິງຂອງແຂວງ ເພື່ອນຳໃຊ້ຊັບພະຍາກອນທຳມະຊາດທາດ ທີ່ມີຢູ່ຢ່າງຈຳກັດ ໃຫ້ເກີດປະໂຫຍດສູງສຸດ;

11. ເອົາໃຈໃສ່ ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 5 ປີຂອງແຂວງ ຄັ້ງທີ VII, ສຸມໃສ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 5 ປີ ຄັ້ງທີ VIII ແລະ ແຜນການປະຈຳປີ 2026 ຕິດພັນກັບການສ້າງແຜນການລົງທຶນຂອງແຂວງ ໂດຍມີການປະສານສົມທົບແຕ່ຫົວທີກັບ ສະພາປະຊາຊົນແຂວງ ກ່ອນນຳເຂົ້າສະເໜີຕໍ່ກອງປະຊຸມ ຄັ້ງປະຖົມມະລຶກຂອງ ສະພາປະຊາຊົນແຂວງ ຊຸດທີ III;

12. ສືບຕໍ່ຊຸກຍູ້ບັນດາຄາດໝາຍຂົງເຂດວັດທະນະທຳ-ສັງຄົມ ໃຫ້ໄດ້ຖືກຈັດຕັ້ງປະຕິບັດສຳເລັດຕາມລະດັບຄາດໝາຍ;
13. ສືບຕໍ່ສ້າງ ແລະ ປັບປຸງ, ປະເມີນນິຕິກຳໃຕ້ກົດໝາຍ ເພື່ອຄຸ້ມຄອງບໍລິຫານລັດໃຫ້ມີປະສິດທິພາບ, ປະສິດທິຜົນຍິ່ງຂຶ້ນ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການປົກຄອງແຂວງຊີ້ນຳບັນດາພະແນກການ, ອົງການລັດຂອງແຂວງ ແລະ ອົງການປົກຄອງເມືອງຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມການກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ